ໂບວດິນ ເບຣດໂດຟ

# ສອງສ່ຽວກັບນ້ອງຊາຍຜູ້ໜຶ່ງ ເດັກນ້ອຍ ໃນ ສ ປ ປ ລາວ

ຖ່າຍພາບໂດຍ : ເຢີຣເກັນ ສາຍເຕະ



Danish Red Cross Danida

# ສອງສ່ຽວກັບນ້ອງຊາຍຜູ້ໜຶ່ງ
# ເດັກນ້ອຍ ໃນ ສ ປ ປ ລາວ

ສ່ອງສ່ຽວ ແລະ ນ້ອງຊາຍຄົນໜຶ່ງ

ປຶ້ມຫົວນີ້ແມ່ນໄດ້ອອກແບບມາສຳລັບຊັ້ນປະຖົມ ປີທີ 1 ເຖິງ ປີທີ 3

ຈັດພິມໂດຍ: ອົງການກາແດງເດັນມາກ, ວຽງຈັນ, 2003
ພິມທີ່: ນິບບູລີ ເພຣັດສ ຈຳກັດ, ຊຽງໃໝ່ ປະເທດໄທ
ຈັດພິມຄັ້ງທຳອິດ: ກຸມພາ 2003



# ສອງສ່ຽວກັບນ້ອງຊາຍຜູ້ໜຶ່ງ
# ເດັກນ້ອຍ ໃນ ສ ປ ປ ລາວ

ແຕ່ງໂດຍ : **Bodil Bredsdorff**
ຖ່າຍພາບໂດຍ : **Jørgen Schytte**

# ຂໍ້ມູນກ່ຽວກັບອົງການກາແດງລາວ
# ແລະໂຄງການຮັກສາສຸຂະພາບຂັ້ນຕົ້ນຂອງກາແດງລາວເດັນມາກ.

ຂໍ້ມູນກ່ຽວກັບອົງການກາແດງລາວ
ແລະໂຄງການຮັກສາສຸຂະພາບຂັ້ນຕົ້ນຂອງກາແດງລາວເດັນມາກ.

ກາແດງລາວ ແມ່ນອົງການອາສາສະໝັກ ແລະ
ຈັດຕັ້ງມະຫາຊົນທີ່ມີໜ້າທີ່ສະໜັບສະໜູນກິດຈະກຳຕ່າງໆ
ແນໃສ່ລຶບລ້າງຄວາມທຸກຍາກຂອງປະຊາຊົນໃນເຂດຫ່າງໄກສອກຫລີກ.
ວຽກງານຕົ້ນຕໍ ປະກອບວຽກສົ່ງເສີມສຸຂະພາບ, ການສຶກສາ, ຊ່ວຍເຫຼືອປະຊາຊົນບັນດາເຜົ່າ
ທີ່ຖືກເຄາະຮ້າຍຈາກໄພທຳມະຊາດ ແລະ ມະນຸດສ້າງຂຶ້ນ.
ກາແດງລາວ ເປັນແມ່ແຮງແຫ່ງນ້ຳໃຈ ທີ່ມີຄວາມເມດຕາສົງສານ
ເຮັດໃຫ້ໂລກສົດໃສດ້ວຍນ້ຳໃຈ
ທີ່ບໍ່ມີພົມແດນ ແລະ ປຽບດັ່ງແສງຕາເວັນທີ່ສ່ອງແສງທົ່ວດິນລາວ.

ໂຄງການຮັກສາສຸຂະພາບຂັ້ນຕົ້ນ ກາແດງລາວ-ເດັນມາກ ໄດ້ໃຫ້ການສະໜັບສະໜູນວຽກງານ
ໂຮງຮຽນປະຖົມ, ວຽກງານລຶບລ້າງການກືກໜັງສື, ວຽກງານສົ່ງເສີມສຸຂະພາບ ແລະ ການສ້າງ
ລາຍໄດ້ໃຫ້ແກ່ປະຊາຊົນ ໃນເຂດແຂວງຜົ້ງສາລີ ຊຽງຂວາງ ແລະ ຫົວພັນ.
ທຶນຮອນປະກອບເຂົ້າໃນວຽກງານດັ່ງກ່າວ ໄດ້ມາຈາກການຊ່ວຍເຫຼືອຂອງນ້ອງນັກຮຽນ, ພໍ່ແມ່
ນັກຮຽນ ແລະ ປະຊາຊົນຂອງປະເທດເດັນມາກ.







ຢູ່ທີ່ສາທາລະນະລັດປະຊາທິປະໄຕປະຊາຊົນລາວ, ຍັງມີບ້ານນ້ອຍແຫ່ງໜຶ່ງທີ່ຕັ້ງຢູ່ຫ່າງໄກຈາກຕົວເມືອງ, ຕັ້ງຢູ່ຕາມຮ່ອມຫ້ວຍພູເຂົາ. ຍາມເຊົ້າຈະມີເມກໝອກຫຼາຍປົກຄຸມເຮືອນຊານແລະກໍ່ຈະແນມບໍ່ເຫັນປ່າໄມ້ທີ່ອ້ອມລ້ອມບ້ານເລີຍ. ທົ່ງນາທີ່ຢູ່ຕາມຮ່ອມພູມືດມົວດ້ວຍເມກໝອກເປັນຍ່ານເປັນຕອນ ເບິ່ງແລ້ວຍາກຄືກັບທາງລົດຢູ່ທາງໃດກໍ່ມີແຕ່ເມກໝອກ. ມີນ້ຳນ້ອຍສາຍໜຶ່ງໄຫຼຜ່ານ,ມີຂົວໄມ້ກ່າຍຂ້າມແລະມີຂັ້ນໄດຂຶ້ນຕະລິ່ງທັງສອງຟາກຝັ່ງ. ຍາມເຊົ້າເຊັ່ນນີ້ ມີສາຍລົມເຢັນຊື່ນບານພັດຜ່ານ. ອາກາດໜາວເຢັນເຮັດໃຫ້ຄົນແລະສັດໜາວສັ່ນໄປຕາມກັນ.

ລະດູໜາວໄກ້ຈະໝົດແລ້ວ ລະດູແລ້ງພວມກ້າວເຂົ້າມາ. ທົ່ງນາຫວ່າງເປົ່າແຫ້ງແລ້ງແລະລໍຖ້ານ້ຳຝົນ, ນ້ຳບົກແຫ້ງຂອດ ກາຍເປັນຮ່ອງທີ່ຂາດນ້ຳ. ແນມເບິ່ງບ້ານເຮືອນເຫັນຄວັນໄຟປະສົມກັບເມກໝອກລອຍອອກຈາກຫຼັງຄາເຮືອນທີ່ມຸງດ້ວຍຫຍ້າຄາ. ໝໍ້ໜ່ວຍໃຫຍ່ທີ່ເຄີຍໃຊ້ໜຶ້ງເຂົ້າ, ດຽວນີ້ກາຍມາເປັນໝໍ້ທີ່ຫວ່າງເປົ່າແລະທໍລະມານໃຈ. ຍາມນີ້ແມ່ນຍາມທີ່ຂາດທັງເຂົ້າແລະຂາດທັງເງິນ. ປະຊາຊົນບໍ່ມີເຂົ້າກິນ. ພວກເຂົາອຶດຢາກແລະນອນບໍ່ຫຼັບ.













ນີ້ແມ່ນລະດູທີ່ອັນຕະລາຍທີ່ສຸດເພາະແມ່ນໄລຍະທີ່ປະຊາຊົນຂາດແຄນເຂົ້າປາອາຫານ. ແລງມື້ໜຶ່ງ, ຕາເວັນພວມຈະຕົກດິນ ພາຍຫລັງທີ່ເອົາໃຈໃສ່ເຮັດວຽກເຮືອນການຊານ, ທ້າວໝາຍຮູ້ສຶກເມື່ອຍແລະຮ້ອນ ຈຶ່ງໄດ້ອອກມານັ່ງພັກຜ່ອນຢູ່ລະບຽງເຮືອນ. ໃນມື້ນັ້ນ, ນັກຮຽນທຸກຄົນໃນຊັ້ນຮຽນຂອງທ້າວໝາຍໄດ້ຮັບສໍດຳແລະປຶ້ມຂຽນ, ດົນໆ ພວກເຂົາຈຶ່ງໄດ້ຮັບການແຈກຢາຍສິ່ງຂອງເຫຼົ່ານີ້. ທ້າວໝາຍຄິດວ່າລາວຈະໃຊ້ສໍດຳຂຽນປຶ້ມໃໝ່ນີ້ໃຫ້ງາມທີ່ສຸດ. ກ່ອນຈະຂຽນທຸກເທື່ອ ລາວຈະຕ້ອງແຫຼມສໍດຳໃຫ້ດີເພື່ອໃຫ້ຂຽນໄດ້ຊັດແຈ້ງດີ.

ໃນເວລາທີ່ທ້າວໝາຍນັ່ງຂຽນຢູ່ນັ້ນ, ນາງເອກເຊິ່ງແມ່ນນ້ອງສາວ ເຂົ້າມານັ່ງຂ້າງລາວ. ນາງຫາຍໃຈໃຫຍ່ບາດໜຶ່ງແລ້ວເວົ້າຂຶ້ນວ່າ " ໂອ! ເຈົ້າຂຽນໜັງສືງາມຫຼາຍ " ທ້າວໝາຍບໍ່ເວົ້າຫຍັງຕອບ. ທຳມະດາແລ້ວລາວເຂົ້າຮຽນຫ້ອງໃຫຍ່ແລ້ວ ກໍ່ຈະຕ້ອງຂຽນງາມກວ່ານ້ອງສາວທີ່ພວມເຂົ້າຮຽນໃໝ່.

ຫລັງຈາກນັ້ນ ນາງເອກກໍ່ຖາມຂຶ້ນວ່າ " ຂ້ອຍລົບກວນເຈົ້າບໍ ?"

ອ້າຍຕອບວ່າ " ບໍ່, ເຈົ້າບໍ່ໄດ້ລົບກວນຂ້ອຍດອກ. "

ໃນຂະນະທີ່ພວກເຂົາມີດຽບຢູ່ນັ້ນ, ທ້າວຄູນຂຶ້ນຂັ້ນໄດມານັ່ງຂ້າງທ້າວໝາຍພ້ອມດ້ວຍສຽງດັງແລ້ວເວົ້າວ່າ " ຂ້ອຍຂໍເບິ່ງສິ້ງ. ຂ້ອຍບໍ່ບັຄຄັບໃຫ້ເຈົ້າຂຽນດອກ. "

ແມ່ນແລ້ວຄົນເຮົາບໍ່ຄວນບັຄຄັບກັນ. ຄົນສຸດທ້າຍທີ່ຂຶ້ນມາເບິ່ງແມ່ນພໍ່ຂອງທ້າວໝາຍເອງ. ພໍ່ເວົ້າວ່າ " ໂອ! ສໍດຳນີ້ຄາມຫລາຍ, ເຈົ້າສັນຍານຳຂ້ອຍວ່າຈະຮັກສາມັນໃຫ້ດີໆ ບໍ່ໃຫ້ມັນຫັກ ."

ແນ່ນອນ, ທ້າວໝາຍຈະຕ້ອງຮັກສາສໍດຳນັ້ນໃຫ້ດີໆ. ເມື່ອຄາວຍັງນ້ອຍ, ພໍ່ຂອຄລາວກໍ່ເຄີຍໄດ້ເຂົ້າໂຮງຮຽນເໝືອນກັນເຂົ້າໄດ້ພຽງປີດຽວກໍ່ໄດ້ເຊົາ ເພາະຄາວນັ້ນ ມີເສິກສົງຄາມ. ລາວຍັງເຂົ້າໃຈໄດ້ວ່າໂຮງຮຽນແມ່ນສິ່ງທີ່ຈຳເປັນແລະສຳຄັນ. ສຸດທ້າຍທັງສາມຄົນລົງຈາກເຮືອນໄປ. ທ້າວໝາຍນັ່ງຂຽນໜັງສືຜູ່ດຽວຕໍ່ໄປຈົນໄດ້ເກືອບໜ້າໜຶ່ງ. ລາວກຳສໍດຳແໜ້ນໂພດ, ສໍດຳເລີຍຫັກເປັນສອງທ່ອນ. ທ້າວໝາຍບໍ່ກ້າບອກພໍ່ ເພາະວ່າລາວໄດ້ສັນຍາວ່າຈະຮັກສາມັນໃຫ້ດີໆ ລາວຄິດວ່າຖ້າບອກພໍ່, ພໍ່ຈະເສຍໃຈແລະຮ້າຍໃຫ້ ຢ່າງຮຸນແຮງ.





# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນໍາ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ